# ຜູ້ໃຊ້

## ການເພີ່ມຜູ້ໃຊ້

<u>**ການເພີ່ມຜູ້ໃຊ້ງານ**</u>

**ໃນລະບົບສາມາດເພີ່ມຜູ້ໃຊ້ ແລະ ກຳນົດໜ້າທີ່/ການອານຸຍາດຕ່າງໆທີ່ຈຳເປັນໄດ້ ເພື່ອຈຳກັດການເຂົ້າ ເຖິງຂໍ້ມູນ ແລະ ຕິດຕາມການເຄື່ອນໄຫວຂອງຜູ້ໃຊ້ນັ້ນໆ. ໃນຕົວຢ່າງນີ້ຈະໃຊ້ຜູ້ໃຊ້ທີ່ເປັນ Manager ເຊິ່ງມີສິດ ໃຫຍ່ສຸດໃນລະບົບ**

**1. ໃຫ້ກົດໃສ່ເມນູ ການຕັ້ງຄ່າ ແລ້ວເລືອກ ຜູ້ໃຊ້**




**2. ຫຼັງຈາກນັ້ນກົດໃສ່ ເພີ່ມຜູ້ໃຊ້ໃໝ່**




**3. ໃສ່ ອີເມວທີ່ຕ້ອງການເພີ່ມ ແລ້ວກົດໃສ່ ເພີ່ມ ແລະ ປ້ອນຂໍ້ມູນຂອງຜູ້ໃຊ້ໃໝ່ ກົດບັນທຶກ**







**ໝາຍເຫດ: ຫ້ອງແບບຟອມທີ່ມີເຄື່ອງໝາຍ( * ) ແມ່ນລະບົບບັງຄັບໃຫ້ໃສ່ຂໍ້ມູນ**

- **ຊື່ : ໝາຍເຖິງ ຊື່ ຊື່ຜູ້ໃຊ້ງານທີ່ຈະສະແດງໃນລະບົບ**
- **ອີເມວ : ໝາຍເຖິງ ອີເມວຂອງຜູ້ໃຊ້ງານ**
- **ລະຫັດຜ່ານ : ໝາຍເຖິງ ລະຫັດທີ່ໃຊ້ລ໋ອກອິນເຂົ້າລະບົບ ( ຕົວຢ່າງລະຫັດ ຕ້ອງມີຕົວເລກ ແລະ ຕົວໜັງສືພາສາອັງກິດນ້ອຍ ທັງໝົດລວມກັນ 8 ໂຕຂຶ້ນໄປ ( b1230385 ຫລື dkor1234 ຫລື bansi11la )**
- **ເບີໂທລະສັບ : ໝາຍເຖິງ ເລກເບີໂທລະສັບຂອງຜູ້ໃຊ້ງານ**
- **ພາສາ : ໝາຍເຖິງ ພາສາທີ່ຜູ້ໃຊ້ງານນຳໃຊ້**
- **ເປີດໃຊ້ 2FA : ໝາຍເຖິງ ການເປີດການນຳໃຊ້ລະຫັດຢືນຢັນຄວາມປອດໄພທີ່ລະບົບຈະສົ່ງເຂົ້າໄປທາງອີເມວໃຫ້ເວລາລ໋ອກອິນ ເຂົ້າລະບົບ**

**ວິດີໂອ : [https://youtu.be/wwXkDSTO3ys?si=bNXQAm1hyWUtdwu_](https://youtu.be/wwXkDSTO3ys?si=bNXQAm1hyWUtdwu_)**

## ກຳນົດສິດຜູ້ໃຊ້ ເຮັດແນວໃດ ?

**<u>ການກຳນົດສິດຜູ້ໃຊ້ງານ</u>**

ການກຳນົດໜ້າທີ່ຂອງຜູ້ໃຊ້ໃໝ່ ( **Manager** ແມ່ນຜູ້ໃຊ້ທີ່ມີສິດສູງສຸດ ) ຫຼື ສາມາດກົດເລືອກການອານຸ ຍາດສະເພາະຕາມໜ້າທີ່ຂອງຜູ້ໃຊ້ໃໝ່ໄດ້

1. ໃຫ້ກົດໃສ່ເມນູ **ການຕັ້ງຄ່າ** ແລ້ວເລືອກ **ຜູ້ໃຊ້**




2. ຫຼັງຈາກນັ້ນກົດໃສ່ **ເພີ່ມຜູ້ໃຊ້ໃໝ່ ໃສ່** ອີເມວ







**- ຖ້າມີເມວຢູ່ແລ້ວ ກົດແກ້ໄຂ ແລ້ວຕິກຟັງຊັ່ນ ທີ່ຕ້ອງການ ກຳນົດສິດ**




3. ຕໍ່ໄປ ແມ່ນ **ກຳນົດສິດ ແລະ ໜ້າທີ່ຂອງຜູ້ໃຊ້** ແລ້ວ **ກົດບັນທຶກ**




ແລະ ລະບົບຈະສະແດງຂໍ້ຄວາມດັ່ງລຸ່ມນີ້ໃນກໍລະນີທີ່ບັນທຶກສຳເລັດແລ້ວ




**ໝາຍເຫດ**: ຫ້ອງແບບຟອມທີ່ມີເຄື່ອງໝາຍ( * ) ແມ່ນລະບົບບັງຄັບໃຫ້ໃສ່ຂໍ້ມູນ

- ການອານຸຍາດ : ໝາຍເຖິງການກຳນົດສິດໃຫ້ຜູ້ໃຊ້ສາມາດເຫັນສະເພາະທີ່ກຳນົດໃຫ້ ແລະ ໃຊ້ງານໄດ້ສະເພາະ ຟັງຊັ່ນ ຫຼື ເມນູ ນັ້ນ

ວິດີໂອ : [https://youtu.be/wwXkDSTO3ys?si=bNXQAm1hyWUtdwu_&t=55](https://youtu.be/wwXkDSTO3ys?si=bNXQAm1hyWUtdwu_&t=55)

**<o:p></o:p>**

# ການເພີ່ມຜູ້ໃຊ້ ແລະ ກຳນົດສິດ

## ການເພີ່ມຜູ້ໃຊ້ ແລະ ກຳນົດສິດເຂົ້າເຖິງການໃຊ້ງານ

ໃນລະບົບ 1 ຈະບໍ່ຈຳກັດຜູ້ໃຊ້ງານ ແຕ່ຈະໃຊ້ໄດ້ຟຣີ 3 ຜູ້ໃຊ້, ຖ້າຕ້ອງການເພີ່ມຜູ້ໃຊ້ງານສາມາດຕິດຕໍ່ຫາທີມງານຊ່ວຍເຫຼືອໄດ້ທາງ Whatsapp

1 ຜູ້ໃຊ້ = 1 ອີເມວ ແລະ ເບີໂທ, ເພາະອີເມວ 1 ຈະຜູກເບີໂທໄດ້ 1 ເບີເທົ່ານັ້ນ

1 ບໍລິສັດ = 1 ລະບົບ, 1 ອີເມວ ສາມາດໃຊ້ໄດ້ບໍ່ຈຳກັດບໍລິສັດ

ຂັ້ນຕອນການຕັ້ງຄ່າ:

### 1. ການເພີ່ມຜູ້ໃຊ້ໃໝ່

ເຂົ້າການຕັ້ງຄ່າໃນເມນູຫຼັກ > ຜູ້ໃຊ້




ພິມອີເມວທີ່ຕ້ອງການໃຫ້ເຂົ້າລະບົບ ແລ້ວກົດເພີ່ມ 




**ສຳລັບອີເມວທີ່ຍັງບໍ່ເຄີຍມີລະບົບ**

1. ລະບົບຈະແຈ້ງເຕືອນຂຶ້ນມາ ຖ້າອີເມວທີ່ເພີ່ມໃໝ່ຍັງບໍ່ເຄີຍມີລະບົບມາກ່ອນ

2. ເພີ່ມຂໍ້ມູນໃຫ້ຜູ້ໃຊ້ໃໝ່, ໃສ່ຊື່ ແລະ ລະຫັດຜ່ານ ເພື່ອໃຫ້ຜູ້ໃຊ້ໃໝ່ນຳໃຊ້ໃນການເຂົ້າລະບົບ

- ສາມາດໃຫ້ຜູ້ໃຊ້ງານຂອງອີເມວນັ້ນ ຢັ້ງຢືນເບີໂທລະສັບຫຼັງເຂົ້າໃຊ້ງານດ້ວຍຕົວເອງໄດ້

- ເປີດໃຊ້ງານສຳລັບ 2FA ແມ່ນຕ້ອງເປັນອີເມວທີ່ໃຊ້ງານຈິງ ເພື່ອເວລາເຂົ້າລະບົບຈະໄດ້ຮັບຕົວເລກ OTP ໃນອີເມວກ່ອນ

3. ຫຼັງໃສ່ຂໍ້ມູນແລ້ວ ກົດບັນທຶກ, ຈາກນັ້ນເລືອກກຳນົດສິດການເຂົ້າເຖິງແຕ່ລະຟັງຊັ້ນໃຫ້ຜູ້ໃຊ້ງານໃໝ່ໄດ້ເລີຍ




## ສຳລັບອີເມວທີ່ເຄີຍເຂົ້າລະບົບແລ້ວ

ລະບົບຈະຟ້ອງຂຶ້ນມາ ແລະ ບໍ່ຈຳເປັນຕ້ອງເພີ່ມຂໍ້ມູນຂອງຜູ້ໃຊ້ໃໝ່.

ສະນັ້ນ, ຫຼັງເພີ່ມອີເມວແລ້ວແມ່ນກຳນົດສິດການເຂົ້າເຖິງຟັງຊັ້ນຕ່າງໆໄດ້ເລີຍ ແລ້ວເຂົ້າລະບົບດ້ວຍລະຫັດຜ່ານເກົ່າໄດ້ເລີຍ.



## 2. ການກຳນົດສິດ

ສາມາດກຳນົດສິດຕອນເພີ່ມຜູ້ໃຊ້ໃໝ່ ຫຼື ກົດແກ້ໄຂຂອງຜູ້ໃຊ້ທີ່ມີຢູ່ແລ້ວເພື່ອປ່ຽນແປງສິດການໃຊ້ງານ




ເລືອກກຳນົດສິດແລ້ວກົດ "**ບັນທຶກ**"

